**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 82 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 / 12 / 22

# ມະຕິ

## ກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ 2022 ແລະ ທິດທາງແຜນການ ປະຈໍາປີ 2023

- ອີງຕາມ ລັດຖະທໍາມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 មិຖຸນາ 2020, ມາດຕາ 12 ແລະ ມາດຕາ 59;
- ອີງຕາມບົດລາຍງານຂອງລັດຖະບານ ສະບັບເລກທີ 2998/ກຜທ, ລົງວັນທີ 9 ທັນວາ 2022 ກ່ຽວກັບ ການຈັດຕັ້ງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ 2022 ແລະ ທິດທາງແຜນການ ປະຈໍາປີ 2023.

ຜ່ານການຮັບຟັງການລາຍງານຂອງລັດຖະບານ, ການຄົ້ນຄວ້າພິຈາລະນາ ແລະ ການຄົ້ນຄວ້າປະກອບຄໍາຄິດຄໍາເຫັນຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາແຫ່ງຊາດໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX,

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ 2022**

ກອງປະຊຸມສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ແລະ ເຫັນດີຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2022 ໃນສະພາບທີ່ປະເທດພວກເຮົາໄດ້ປະເຊີນກັບສະພາບການຂອງສາກົນ ທີ່ຜັນແປຢ່າງສັບສົນ, ຄາດຄະເນໄດ້ຍາກ ບວກກັບຂໍ້ຫຍຸ້ງຍາກ ແລະ ອຸປະສັກຈໍານວນໜຶ່ງຢູ່ພາຍໃນປະເທດ ໄດ້ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ, ແຕ່ສາມາດປະຕິບັດສໍາເລັດຫຼາຍຄາດໝາຍ ທີ່ພົ້ນເດັ່ນດັ່ງນີ້:

1) ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ເສດຖະກິດສືບຕໍ່ຂະຫຍາຍຕົວ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;
2) ລວມຍອດຜະລິດຕະພັນພາຍໃນ (GDP) ຈະບັນລຸ 4,4% (ມະຕິສະພາ 4,5%);

3) ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ປະຕິບັດໄດ້ 37.122,39 ຕື້ກີບ ເທົ່າກັບ 126,2% ຂອງແຜນການປີ (ມະຕິສະພາ 29.420 ຕື້ກີບ);
4) ການສົ່ງອອກສິນຄ້າປະຕິບັດໄດ້ 7.834 ລ້ານໂດລາສະຫະລັດ ເທົ່າກັບ 103,1% ຂອງແຜນການ (ມະຕິສະພາ 7.600 ລ້ານໂດລາສະຫະລັດ), ໃນນັ້ນ ສະເພາະການສົ່ງອອກໄຟຟ້າ ປະຕິບັດໄດ້ 2.358 ລ້ານໂດລາສະຫະລັດ ເທົ່າກັບ 115% ຂອງແຜນການ (ມະຕິສະພາ 2.050 ລ້ານໂດລາສະຫະລັດ), ແຮ່ທາດ ປະຕິບັດໄດ້ 1.840 ລ້ານໂດລາສະຫະລັດ ເທົ່າກັບ 119% ຂອງແຜນການ (ມະຕິສະພາ 1.546 ລ້ານໂດລາສະຫະລັດ);

ຄຽງຄູ່ກັບຜົນສຳເລັດທີ່ພົ້ນເດັ່ນດັ່ງກ່າວ, ກອງປະຊຸມເຫັນວ່າການຈັດຕັ້ງປະຕິບັດບາງຄາດໝາຍຍັງມີຄວາມຄືບໜ້ານ້ອຍ ແລະ ບາງຄາດໝາຍກໍຍັງມີຄວາມສ່ຽງທີ່ຈະບໍ່ບັນລຸຕາມມະຕິສະພາແຫ່ງຊາດ, ຊຶ່ງເປັນຕົວຊີ້ບອກເຖິງຄວາມບອບບາງຂອງເສດຖະກິດມະຫາພາກ, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ເປັນຕົ້ນ:

1) ອັດຕາເງິນເຟີ້ເພີ່ມຂຶ້ນຈາກ 6,25% ໃນເດືອນມັງກອນ ມາເປັນ 38,46% ໃນເດືອນ ພະຈິກ ປີ 2022;
2) ອັດຕາແລກປ່ຽນເງິນກີບທຽບສະກຸນເງິນຕາຕ່າງປະເທດໄດ້ອ່ອນຄ່າລົງຕໍ່ເນື່ອງ, ຄ່າເງິນກີບໄດ້ຫຼຸດລົງ 35%;
3) ລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນປະຕິບັດໄດ້ພຽງແຕ່ 1.729 ໂດລາສະຫະລັດ (ມະຕິສະພາ 2.358 ໂດລາສະຫະລັດ) ເທົ່າກັບ 73,32% ຂອງແຜນການ;
4) ຄາດໝາຍຫັນປ່ຽນໂຄງປະກອບເສດຖະກິດຂະແໜງການບໍລິການ ກວມ 37,1% ໄດ້ຫຼຸດລົງຈາກ 39,7% ໃນປີ 2021 (ມະຕິສະພາແຫ່ງຊາດຮັບຮອງ 38,9%);
5) ຫຼາຍຄາດໝາຍໃນຂົງເຂດ ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ ຍັງບໍ່ທັນສາມາດປະຕິບັດບັນລຸຕາມມະຕິສະພາແຫ່ງຊາດ ເປັນຕົ້ນ ຄາດໝາຍດ້ານການສຶກສາ ມີ 8 ຄາດໝາຍ, ສາທາລະນະສຸກ ມີ 4 ຄາດໝາຍ, ຖະແຫຼງຂ່າວ ແລະ ວັດທະນະທຳ ມີ 5 ຄາດໝາຍ, ແຮງງານ ແລະ ສະຫວັດດີການສັງຄົມ ມີ 3 ຄາດໝາຍ; ວຽກງານພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກປະຕິບັດບໍ່ໄດ້ຕາມແຜນ 6 ຄາດໝາຍ ແລະ ບໍ່ໄດ້ຮັບການຈັດຕັ້ງປະຕິບັດ 1 ຄາດໝາຍ.

ກອງປະຊຸມສະເໜີໃຫ້ລັດຖະບານສຸມໃສ່ຈັດຕັ້ງປະຕິບັດຄາດໝາຍທີ່ບໍ່ທັນບັນລຸດັ່ງກ່າວເຂົ້າໃນແຜນການປີ 2023 ເພື່ອຮັບປະກັນໃຫ້ເສດຖະກິດເຕີບໂຕຕໍ່ເນື່ອງ, ມີຄຸນນະພາບ, ມີຄວາມໝັ້ນຄົງ ແລະ ຍືນຍົງ, ຍົກສູງຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນ, ແກ້ໄຂຄວາມທຸກຍາກ, ການພັດທະນາຊົນນະບົດ, ແກ້ໄຂການວ່າງງານ, ຄ່າຄອງຊີບທີ່ແພງຂຶ້ນ, ແກ້ໄຂໜີ້ສິນສາທາລະນະ ແລະ ການແກ້ໄຂຢາເສບຕິດທີ່ຕິດພັນກັບການປະຕິບັດວາລະແຫ່ງຊາດ.

**ມາດຕາ 2 ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2023**

ກອງປະຊຸມເຫັນດີເປັນເອກະພາບຕໍ່ບັນດາເນື້ອໃນທີ່ໄດ້ກຳນົດໄວ້ຢູ່ໃນທິດທາງລວມ, ຄາດໝາຍ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2023 ຕາມການສະເໜີຂອງລັດຖະບານ ພ້ອມທັງຮັບຮອງເອົາບັນດາຄາດໝາຍແຕ່ລະດ້ານ ດັ່ງນີ້:

## 1. ຄາດໝາຍດ້ານເສດຖະກິດມະຫາພາກ

### 1.1 ຄາດໝາຍດ້ານການເຕີບໂຕ

ຄາດຄະເນອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP) 4,5% ຂຶ້ນໄປ ເທົ່າກັບ 234.160 ຕື້ກີບ, ສະເລ່ຍຕໍ່ຫົວຄົນເທົ່າກັບ 1.625 ໂດລາສະຫະລັດ; ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນເທົ່າກັບ 1.534 ໂດລາສະຫະລັດ, ໂຄງປະກອບເສດຖະກິດແຫ່ງຊາດ ໃນປີ 2023 ຂະຫຍາຍຕົວໃນອັດຕາສ່ວນ ດັ່ງນີ້:

- ຂະແໜງກະສິກຳ ເພີ່ມຂຶ້ນ 2,5% ກວມ 17,2% ຂອງ GDP;
- ຂະແໜງອຸດສະຫະກຳ ເພີ່ມຂຶ້ນ 5,0% ກວມ 34,2% ຂອງ GDP;
- ຂະແໜງການບໍລິການ ເພີ່ມຂຶ້ນ 4,7% ກວມ 37,5% ຂອງ GDP;
- ພາສີ-ອາກອນ ເພີ່ມຂຶ້ນ 4,3% ກວມ 11,1% ຂອງ GDP.

### 1.2 ດ້ານເງິນຕາ

1) ຄວບຄຸມປະລິມານເງິນ M2 ໃຫ້ຂະຫຍາຍຕົວບໍ່ເກີນ 26% ທຽບໃສ່ປີຜ່ານມາ;
2) ຄວບຄຸມອັດຕາເງິນເຟີ້ ສະເລ່ຍໝົດປີໃຫ້ຢູ່ໃນລະດັບບໍ່ເກີນ 9%;
3) ຄຸ້ມຄອງອັດຕາແລກປ່ຽນໃຫ້ເໜັງຕີງສອດຄ່ອງກັບລະດັບການດຸ່ນດ່ຽງດ້ານເສດຖະກິດ-ເງິນຕາ ແລະ ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້;
4) ຄັງສຳຮອງເງິນຕາຕ່າງປະເທດໃຫ້ກຸ້ມການນຳເຂົ້າ ບໍ່ໃຫ້ຫຼຸດ 3 ເດືອນ.

### 1.3 ດ້ານງົບປະມານ

1) ຄາດຄະເນລາຍຮັບງົບປະມານທັງໝົດໃຫ້ໄດ້ 38.448 ຕື້ກີບ, ເທົ່າກັບ 16,42% ຂອງ GDP;
2) ຄາດຄະເນລາຍຈ່າຍທັງໝົດຈະຢູ່ໃນລະດັບ 43.498 ຕື້ກີບ, ເທົ່າກັບ 18,58% ຂອງ GDP;
3) ຄາດຄະເນການຂາດດຸນງົບປະມານ 5.050 ຕື້ກີບ, ເທົ່າກັບ 2,16% ຂອງ GDP.

### 1.4 ການດຸ່ນດ່ຽງຂາອອກ-ຂາເຂົ້າ

1) ມູນຄ່າສົ່ງອອກ 8.225 ລ້ານໂດລາສະຫະລັດ;
2) ມູນຄ່າການນຳເຂົ້າ 7.100 ລ້ານໂດລາສະຫະລັດ;
3) ດຸນການຄ້າຕ່າງປະເທດ 1.125 ລ້ານໂດລາສະຫະລັດ.

### 1.5 ດ້ານແຫຼ່ງທຶນເພື່ອການພັດທະນາ

ຄວາມຕ້ອງການທຶນລວມທັງໝົດ 52.098 ຕື້ກີບ, ເທົ່າກັບ 22.25% ຂອງ GDP ໃນນີ້:

1. ການລົງທຶນຂອງລັດ ທັງໝົດ 17.308 ຕື້ກີບ, ໃນນັ້ນ:

1.1. ງົບປະມານການລົງທຶນພາຍໃນ 4.318 ຕື້ກີບ;

- ການລົງທຶນປົກກະຕິ 2.500 ຕື້ກີບ, ໃນນີ້ຈັດສັນໃຫ້:
  + ໂຄງການຊຳລະໜີ້ສິນ 60% ຈຳນວນ 1.500 ຕື້ກີບ;
  + ໂຄງການສືບຕໍ່ 30% ຈຳນວນ 750 ຕື້ກີບ;
  + ໂຄງການສະເໜີໃໝ່ 10% ຈຳນວນ 250 ຕື້ກີບ.
- ການລົງທຶນຈັດຮັບ-ຈັດຈ່າຍ ຜ່ານງົບປະມານ ແລະ ບ້ວງລົງທຶນອື່ນໆ 1.818 ຕື້ກີບ,

1.2. ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ເປັນໃດງການ 12.990 ຕື້ກີບ, ໃນນີ້:

- ທຶນຊ່ວຍເຫຼືອລ້າ 4.548 ຕື້ກີບ;
- ທຶນກູ້ຢືມ 8.442 ຕື້ກີບ.

2. ການລົງທຶນເອກະຊົນ ພາຍໃນ ແລະ ຕ່າງປະເທດ 30.890 ຕື້ກີບ;
3. ການລົງທຶນຈາກແຫຼ່ງອື່ນໆ (ການລົງທຶນຈາກຊຸມຊົນ) 3.900 ຕື້ກີບ.

ກອງປະຊຸມມອບໃຫ້ລັດຖະບານຈັດສັນບ່ວງເງິນເກີນແຜນ ປີ 2022 ໃຫ້ຂະແໜງວັດທະນະທຳ-ສັງຄົມ, ອົງການກາແດງລາວ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ບໍ່ຫຼຸດ 200 ຕື້ກີບ; ວຽກງານອອກໃບຕາດິນ 20 ຕື້ກີບ; ສ່ວນທີ່ເຫຼືອໃຫ້ນຳໃຊ້ເຂົ້າໃນການແກ້ໄຂໃດງການລົງທຶນຂອງລັດ ທີ່ສຳເລັດ 100%.

2. ຄາດໝາຍຂະແໜງການ

ລາຍລະອຽດຄາດໝາຍຂອງຂະແໜງການຕາມເອກະສານຊ້ອນທ້າຍ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2023**

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາ 12 ແຜນວຽກຈຸດສຸມ ແລະ 4 ມາດຕະການ ຕາມການສະເໜີຂອງລັດຖະບານ, ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການດັ່ງກ່າວ, ກອງປະຊຸມສະເໜີເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ເອົາໃຈໃສ່ແກ້ໄຂຂໍ້ຄົງຄ້າງ, ອຸປະສັກ ແລະ ຂອດອຸດຕັນ ໃນໄລຍະຜ່ານມາໃຫ້ມີບາດກ້າວບຸກທະລຸ, ມີສ່ວນຮ່ວມຂອງປະຊາຊົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງຫຼາຍຂຶ້ນ;
2. ເອົາໃຈໃສ່ຕິດຕາມສະພາບເສດຖະກິດໂລກຢ່າງໃກ້ຊິດທັນເອົາສິ່ງທ້າທາຍເປັນກາລະໂອກາດໃນການພັດທະນາປະເທດເຮົາ ເພື່ອມີມາດຕະການຮັບມືແຕ່ຫົວທີ ແລະ ທັນການ;
3. ເອົາໃຈໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ເປັນວຽກບຸລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ມີຄວາມຄືບໜ້າຫຼາຍຂຶ້ນເພື່ອຮັບປະກັນບໍ່ໃຫ້ປະເທດຂອງພວກເຮົາເຂົ້າສູ່ວິກິດ, ໂດຍສະເພາະການຄົ້ນຄວ້າສ້າງແຜນການຫາແຫຼ່ງຊຳລະໜີ້ສິນທີ່ຍືນຍົງໃນໄລຍະສັ້ນ, ກາງ ແລະ ຍາວນານ, ຄຸ້ມຄອງ ແລະ ຈຳກັດໜີ້ສິນໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້ດ້ວຍການລະດົມແຫຼ່ງທຶນຈາກພາຍໃນເປັນຕົ້ນຕໍ; ປະຕິຮູບບັນດາລັດວິສາຫະກິດທີ່ຂາດທຶນໃຫ້ເປັນຮູບປະທຳ, ຮັບປະກັນການປະຕິບັດ 3 ຫຼັກການ ຂອງວາລະແຫ່ງຊາດ ຄື: ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ;
4. ເອົາໃຈໃສ່ຄຸ້ມຄອງມະຫາພາກດ້ານການເງິນ-ເງິນຕາໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມເງິນເຟີ້ ບໍ່ໃຫ້ເພີ່ມຂຶ້ນສູງ, ຮັກສາຄ່າຂອງເງິນກີບທຽບສະກຸນເງິນຕ່າງປະເທດບໍ່ໃຫ້ເໜັງຕີງແຮງ, ຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກທີ່ຈຳເປັນຮັບໃຊ້ຊີວິດປະຈຳວັນ, ທັງເປັນທັນສະໄໝໃນການຊຳລະສະສາງຜ່ານລະບົບທະນາຄານຕິດພັນກັບການປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດໃຫ້ເຂັ້ມງວດ; ຄຸ້ມຄອງການຈັດເກັບລາຍຮັບ ແລະ ລາຍຈ່າຍໃຫ້ມີປະສິດທິຜົນ; ຮີບຮ້ອນເກັບກູ້ເງິນທີ່ກວດເຫັນເພີ່ມຈາກຜົນການກວດສອບ ແລະ ກວດກາລັດ, ໜີ້ສິນທີ່ລັດຖະບານ ແລະ ທະນາຄານແຫ່ງ ສປປ ລາວ ໄດ້ປ່ອຍກູ້ ແລະ ຄໍ້າປະກັນໃຫ້ວິສາຫະກິດລັດ ແລະ ເອກະຊົນໃນໄລຍະຜ່ານມາໃຫ້ສຳເລັດຂາດຕົວ;
5. ຄົ້ນຄວ້າປັບປຸງນະໂຍບາຍພາສີ-ອາກອນຈຳນວນໜຶ່ງເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດປະຈຸບັນແນໃສ່ເພື່ອເພີ່ມລາຍໄດ້ໃຫ້ແກ່ງົບປະມານແຫ່ງລັດ, ສົ່ງເສີມການປະຢັດມັດທະຍັດ ແລະ ຄວບຄຸມການເພີ່ມຂຶ້ນຂອງເງິນເຟີ້;

6. ຮີບຮ້ອນປັບປຸງນິຕິກຳທີ່ຕິດພັນກັບອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ກົດໝາຍວ່າດ້ວຍທີ່ດິນ ເປັນຕົ້ນ ກົນໄກການປະສານງານ, ຂັ້ນຕອນ, ວິທີການ, ຂອບເຂດເນື້ອທີ່, ການກຳນົດເວລາ, ຄວາມຮັບຜິດຊອບຂອງຂະແໜງການຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;

7. ຊຸກຍູ້ປຸກລະດົມສ້າງສະຕິໃຫ້ທຸກພາກສ່ວນທົ່ວສັງຄົມ ລວມທັງພາກລັດ, ເອກະຊົນ, ຜູ້ປະກອບການ, ນັກຮຽນຮູ້ ນັກສຶກສາ, ປັນຍາຊົນ ແລະ ປະຊາຊົນບັນດາເຜົ່າ ໃຫ້ປະຕິບັດນະໂຍບາຍການປະຢັດມັດຖະຍັດດ້ວຍຄວາມຮັບຜິດຊອບ ແລະ ຕື່ນຕົວສູງ, ສ້າງຄວາມເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ປຸກສູງຄວາມຮັກຊາດໃຫ້ສູງຂຶ້ນ ໃນສະພາບທີ່ເສດຖະກິດ-ການເງິນມີຄວາມຫຍຸ້ງຍາກ;

8. ເອົາໃຈໃສ່ຄຸ້ມຄອງແຫຼ່ງທຶນພັດທະນາໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ, ລະດົມທຶນຈາກບັນດາພາກສ່ວນເສດຖະກິດພາຍໃນ ແລະ ຕ່າງປະເທດ, ພັດທະນາຕະຫຼາດຫຼັກຊັບ ແລະ ນຳໃຊ້ກອງທຶນຕ່າງໆ ເພື່ອສະໜອງທຶນໃຫ້ພຽງພໍ ແລະ ຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ບັນລຸຕາມແຜນການ;

9. ເອົາໃຈໃສ່ຄຸ້ມຄອງການລົງທຶນຂອງລັດຢ່າງເຂັ້ມງວດ, ລົງທຶນຕາມຄວາມສາມາດໃນການຊໍາລະສະສາງເປັນຫຼັກ, ເພີ່ມອັດຕາສ່ວນການແກ້ໄຂໜີ້ສິນໃຫ້ໂຄງການສໍາເລັດ 100% ແຕ່ຍັງຄ້າງຊໍາລະເປັນຈໍານວນຫຼວງຫຼາຍ, ຈັດສັນງົບປະມານໃສ່ໂຄງການສືບຕໍ່ທີ່ມີປະສິດທິຜົນ ແລະ ໃກ້ຈະສໍາເລັດ; ໂຄງການລົງທຶນຂອງລັດທີ່ປະຕິບັດຢູ່ທ້ອງຖິ່ນ ຕ້ອງຮັບປະກັນການມີສ່ວນຮ່ວມແຕ່ທົວທີຂອງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ; ປັບປຸງໂຄງປະກອບ ແລະ ຈັດສັນການລົງທຶນຂອງລັດ ໃຫ້ໄປຕາມຂະແໜງການ, ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຊັດເຈນ ແລະ ເໝາະສົມກັບສະພາບຕົວຈິງກວ່າເກົ່າ;

10. ເອົາໃຈໃສ່ປະຕິບັດຄາດໝາຍໃນຂົງເຂດເສດຖະກິດ ເປັນຕົ້ນ ຊຸກຍູ້ສົ່ງເສີມ ການຜະລິດພາຍໃນຕິດພັນກັບການປຸງແຕ່ງເພື່ອທົດແທນການນໍາເຂົ້າ ແລະ ສົ່ງອອກໃຫ້ຫຼາຍຂຶ້ນ; ສືບຕໍ່ຊຸກຍູ້ການຜະລິດອາຫານສັດ, ຝຸ່ນໃຫ້ບັນລຸຕາມຄວາມຕ້ອງການພາຍໃນປະເທດ ຕາມມະຕິຂອງສະພາແຫ່ງຊາດ ພ້ອມທັງມີມາດຕະການເຂັ້ມງວດໃນການກວດກາມາດຕະຖານ ແລະ ຄຸນນະພາບຂອງຜະລິດຕະພັນດັ່ງກ່າວ; ຊ່ວຍເຫຼືອພາກທຸລະກິດ ແລະ ປະຊາຊົນໃຫ້ເຂົ້າເຖິງຕະຫຼາດຕາມສັນຍາກັບປະເທດຄູ່ຄ້າ, ຈໍາກັດການນໍາເຂົ້າຜະລິດຕະພັນທີ່ ຜະລິດໄດ້ຢູ່ພາຍໃນປະເທດ ເພື່ອໃຫ້ການຜະລິດພາຍໃນເຂັ້ມແຂງ; ສືບຕໍ່ຈັດຕັ້ງປະຕິບັດ ແລະ ປະເມີນຜົນແຜນແມ່ບົດແລວທາງເສດຖະກິດ ເໜືອ-ໃຕ້, ນໍາໃຊ້ທ່າແຮງຂອງເສັ້ນທາງລົດໄຟໃຫ້ມີປະສິດທິຜົນດ້ວຍການສ້າງລະບົບບໍລິການຮ່ວມກັນທີ່ສົມເຫດສົມຜົນ ເພື່ອເຊື່ອມໂຍງເຂົ້າສູ່ເສັ້ນທາງລົດໄຟ ຈີນ-ເອີຣົບ; ປັບປຸງກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງກັບລະບົບບໍລິການຂົນສົ່ງ, ປັບປຸງກົນໄກການປະສານງານຂອງ ທ່າບົກ, ເຂດໂລຊິດສະຕິກ ແລະ ເຂດເສດຖະກິດພິເສດໃຫ້ເປັນລະບົບ, ໄລ່ງ່ວນ, ວ່ອງໄວໄດ້ມາດຕະຖານສາກົນ, ກໍານົດໂຄງສ້າງລາຄາຄ່າບໍລິການໃຫ້ເໝາະສົມກັບສະພາບຈຸດພິເສດຂອງແຕ່ລະເຂດ;

11. ຮີບຮ້ອນສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງທ້ອງຖິ່ນທີ່ເປ່ເພ ຈາກໂຄງການກໍ່ສ້າງເສັ້ນທາງ ແລະ ການຂົນສົ່ງແຮ່ທາດຕ່າງໆ; ເພີ່ມທະວີການຕິດຕາມກວດກາ, ປະເມີນຜົນ ແລະ ແກ້ໄຂຜົນກະທົບຈາກໂຄງການພັດທະນາຕ່າງໆຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທໍາມະຊາດ;

12. ຊຸກຍູ້ໃຫ້ຜູ້ພັດທະນາໂຄງການ ຈ່າຍຄ່າຊົດເຊີຍໃຫ້ປະຊາຊົນຜູ້ທີ່ຖືກຜົນກະທົບຈາກໂຄງການພັດທະນາຕ່າງໆໃຫ້ສໍາເລັດຢ່າງຂາດຕົວກ່ອນການພັດທະນາໂຄງການຮີບຮ້ອນຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ແຜນການນໍາໃຊ້ທີ່ດິນຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຕາມກົດໝາຍວ່າດ້ວຍທີ່ດິນໃຫ້ສໍາເລັດ; ປະເມີນຄືນບັນດາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ເຫຼັກແບບທົດລອງ, ຮັບປະກັນການຈັດຕັ້ງປະຕິບັດໂຄງການທົດລອງທີ່ໄດ້ຮັບອະນຸຍາດຜ່ານມາໃຫ້ມີ

ປະສິດທິພາບ ແລະ ປະສິດທິຜົນ, ຫຼີກລ້ຽງການອະນຸຍາດການຂຸດຄົ້ນແຮ່ທາດອື່ນທີ່ບໍ່ໄດ້ຢູ່ໃນໂຄງການທົດລອງ ແລະ ການຫັນປ່ຽນພື້ນທີ່ຂຸດຄົ້ນ, ຖ້າໂຄງການໃດບໍ່ໄດ້ປະຕິບັດໃຫ້ຍົກເລີກສັນຍາ;

13. ສືບຕໍ່ເອົາໃຈໃສ່ ປະຕິບັດບັນດາກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ບໍ່ທັນບັນລຸຄາດໝາຍ; ສ້າງພື້ນຖານໂຄງລ່າງຂອງການສຶກສາຢ່າງເໝາະສົມ, ຈັດສັນໂກຕາລັດຖະກອນໃໝ່ ແລະ ມີນະໂຍບາຍຕໍ່ ຄູ-ແພດ ອາສາສະໝັກ ໂດຍສະເພາະ ຜູ້ເຮັດວຽກມາຫຼາຍປີຢູ່ເຂດຫ່າງໄກສອກຫຼີກ, ສະໜອງອຸປະກອນການຮຽນ-ການສອນ, ປຶ້ມຕຳລາຮຽນໃນສາຍສາມັນສຶກສາ ແລະ ໂຮງຮຽນວິຊາຊີບໃຫ້ທົ່ວເຖິງ, ສຸມໃສ່ແກ້ໄຂບັນຫາການປະລະການຮຽນໃນທຸກຊັ້ນ, ທຸກສາຍຂອງການສຶກສາ ແລະ ສົ່ງເສີມໃຫ້ນັກຮຽນຈົບມັດທະຍົມຕອນຕົ້ນ-ຕອນປາຍ ເຂົ້າຮຽນຕໍ່ສາຍອາຊີວະສຶກສາ, ອົບຮົມວິຊາຊີບ ແລະ ການສຶກສາຊັ້ນສູງໃຫ້ຫຼາຍຂຶ້ນ, ພິຈາລະນາເພີ່ມເງິນເບ້ຍລ້ຽງໃຫ້ນັກຮຽນສາມັນກິນນອນຊົນເຜົ່າໃຫ້ເໝາະສົມກັບຄ່າຄອງຊີບໃນປັດຈຸບັນ; ຮີບຮ້ອນພິຈາລະນາການກຳນົດພະລາກອນ ຄູ-ແພດ ອາສາສະໝັກ ເພື່ອທົດແທນອັດຕາການສູນເສຍໃນຮູບແບບຕ່າງໆໃນແຕ່ລະປີ; ເອົາໃຈໃສ່ວຽກງານໂພຊະນາການອາຫານໃນເດັກ ໃຫ້ບັນລຸຄາດໝາຍ; ປັບປຸງລະບົບປະກັນສຸຂະພາບໂດຍໃຫ້ຜູ້ມີເງື່ອນໄຂຕ້ອງປະກອບສ່ວນຈ່າຍເບ້ຍປະກັນເຂົ້າກອງທຶນປະກັນສຸຂະພາບເພື່ອເຮັດໃຫ້ກອງທຶນ ເຂັ້ມແຂງ ແລະ ຍືນຍົງ; ສົ່ງເສີມພາກສ່ວນທຸລະກິດສືບຕໍ່ລົງທຶນພັດທະນາພື້ນຖານໂຄງລ່າງ, ອະນຸລັກ ແລະ ຟື້ນຟູແຫຼ່ງທ່ອງທ່ຽວຢ່າງມີຈຸດສຸມ, ລັດຖະບານປະກອບສ່ວນສ້າງ ແລະ ສ້ອມແປງເສັ້ນທາງເຂົ້າສູ່ແຫຼ່ງທ່ອງທ່ຽວ ທີ່ເປັນເປົ້າໝາຍ; ປັບປຸງຄ່າແຮງງານຂັ້ນຕ່ຳໃຫ້ເໝາະສົມກັບຄ່າຄອງຊີບໃນປັດຈຸບັນ, ປັບປຸງຖານຂໍ້ມູນແຮງງານໃຫ້ເປັນລະບົບ; ສຸມໃສ່ສ້າງວິຊາຊີບ ແລະ ພັດທະນາສີມືແຮງງານໃຫ້ມີຄຸນນະພາບສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ;

14. ເອົາໃຈໃສ່ປະເມີນຄວາມຄືບໜ້າ ແລະ ປະຕິບັດວຽກຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນເຂດຈຸດສຸມ, ເຂດຫ່າງໄກສອກຫຼີກ ແລະ ເມືອງເປົ້າໝາຍ ທີ່ໄດ້ກຳນົດໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;

15. ເອົາໃຈໃສ່ຊຸກຍູ້ການປະຕິບັດສັນຍາສະໜອງສິນຄ້າ, ພະລັງງານ ທີ່ ສປປ ລາວ ມີພັນທະກັບຕ່າງປະເທດ; ເປັນເຈົ້າການຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນການຊ່ວຍເຫຼືອ ແລະ ໂຄງການລົງທຶນຈາກຕ່າງປະເທດໃຫ້ມີປະສິດທິຜົນ; ຊຸກຍູ້, ຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໃນຂົງເຂດເສດຖະກິດ, ການຄ້າ ແລະ ການລົງທຶນ;

16. ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງໃນຂົງເຂດຍຸຕິທຳ, ສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນຂົງເຂດຕ່າງໆໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນໃຫ້ການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍມີຜົນສັກສິດ, ແນໃສ່ຮັບປະກັນການແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທຸກຂົງເຂດຂອງສັງຄົມໃຫ້ໄປຕາມກົດໝາຍ, ຕາມຫຼັກການເດັດຂາດ, ໂປ່ງໃສ ແລະ ມີອາຊີບ ໂດຍສະເພາະປະຕິບັດມາດຕະການເດັດຂາດຕໍ່ຫົວໜ່ວຍງົບປະມານທີ່ລະເມີດວິໄນແຜນການ-ການເງິນ; ເອົາໃຈໃສ່ ປະຕິບັດວຽກງານ 3 ສ້າງ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາໃຫ້ມີຈຸດສຸມ, ມີການແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຢ່າງຈະແຈ້ງ ເພື່ອສ້າງຄວາມເຂັ້ມແຂງໃຫ້ອົງການປົກຄອງຂັ້ນທ້ອງຖິ່ນ ມີຄວາມເປັນເຈົ້າການຫຼາຍຂຶ້ນໃນການພັດທະນາ.

**ມາດຕາ 4 ມອບໃຫ້ລັດຖະບານກະກຽມລາຍງານຫົວຂໍ້ ດັ່ງນີ້:**

1. ລາຍງານຜົນການຈັດຕັ້ງປະຕິບັດກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5;

2. ລາຍງານຜົນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6.

**ມາດຕາ 5 ການຈັດຕັ້ງປະຕິບັດ**

1. ມອບໃຫ້ລັດຖະບານຊີ້ນໍາບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ ຊຸກຍູ້ຕິດຕາມການຈັດສັນບັນຊີໂຄງການລົງທຶນ ປີ 2023 ໂດຍໃຫ້ກໍາມາທິການແຜນການ, ການເງິນ ແລະ ການກວດສອບ ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນໃຫ້ສໍາເລັດໃນອາທິດທີໜຶ່ງ ເດືອນມັງກອນ ປີ 2023;
3. ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການແຜນການ, ການເງິນ ແລະ ການກວດສອບ, ບັນດາກໍາມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ